**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກໍາ ແລະ ການຄ້າ

ຫ້ອງການ

ເລກທີ..໑໐໙໔......./ຫກ

ນະຄອນຫຼວງວຽງຈັນ, ວັນທີ..໑໔..ມັງກອນ 2026

# ໜັງສືເຊີນ

**ເຖິງ:** ບັນດາບໍລິສັດ ແລະ ວິສາຫະກິດ ທີ່ນັບຖື.

**ເລື່ອງ:** ເຊີນເຂົ້າຮ່ວມປະມູນສົມທຽບລາຄາການສະໜອງ ນໍ້າມຶກ ແລະ ສ້ອມແປງເຄື່ອງໄອທີ ປະຈໍາປີ 2026 ຂອງກະຊວງອຸດສາຫະກາ ແລະ ການຄ້າ.

1. ກະຊວງອຸດສາຫະກໍາ ແລະ ການຄ້າ ຂໍເຊີນບັນດາບໍລິສັດ ແລະ ວິສາຫະກິດ ທີ່ສົນໃຈ ມີຄຸນນະວຸດທິເໝາະສົມ ເຂົ້າຮ່ວມປະມູນສົມທຽບລາຄາ ການສະໜອງ ນໍ້າມຶກ ແລະ ສ້ອມແປງເຄື່ອງໄອທີ ປະຈໍາປີ 2026 ຂອງກະຊວງອຸດສາຫະກໍາ ແລະ ການຄ້າ.

2. ການປະມູນຈະດໍາເນີນຕາມຂັ້ນຕອນ ການປະມູນສົມທຽບລາຄາທີ່ໄດ້ກໍານົດໄວ້ຢູ່ໃນ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ ການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.

3. ບໍລິສັດຕ້ອງມີສໍາເນົາເອກະສານ ໃບທະບຽນວິສາຫະກິດ, ໃບອານຸຍາດດໍາເນີນທຸລະກິດດ້ານການສະໜອງອຸປະກອນເຄື່ອງໄອທີ ແລະ ໃບມອບພັນທະອາກອນປີ 2024-2025 ທີ່ຖືກຕ້ອງຕາມກົດໝາຍ.

4. ບໍລິສັດສາມາດຍື່ນເຈດຈໍານົງຊື້ເອກະສານປະມູນສົມທຽບລາຄາ ໄດ້ທີ່ກະຊວງອຸດສາຫະກໍາ ແລະ ການຄ້າ, ຕັ້ງຢູ່ບ້ານໂພໄຊ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ ທີ່ພະແນກຫັນເປັນດີຈີຕອນ, ຫ້ອງການກະຊວງ (ໂທ: 020 5988 8381 ທ່ານໄຊຈະເລີນພອນ ) ໃນໂມງລັດຖະການ (ເລີ່ມແຕ່ວັນທີ ..15.. ມັງກອນ 2026 ຫາ ວັນທີ..28....ມັງກອນ 2026) ໃນລາຄາ..1.000.000......... ກີບ/ຊອງ ຈໍານວນເງິນດັ່ງກ່າວຈະບໍ່ມີການສົ່ງຄືນ (ວິທີການສໍາລະຕ້ອງຈ່າຍເປັນເງິນສົດ).

5. ຊອງປະມູນສົມທຽບລາຄາສົ່ງກ່ອນເວລາ 9:30 ໂມງ ຂອງວັນທີ..29.... ມັງກອນ 2026 ທີ່ຫ້ອງປະຊຸມທາງໄກ ຊັ້ນ 03 ຊອງປະມູນສົມທຽບລາຄາໃດສົ່ງຊ້າເກີນເວລາທີ່ກໍານົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ, ຊອງປະມູນສົມທຽບລາຄາ ຈະໄດ້ເປີດຊ້ອງໜ້າຄະນະກໍາມະການຈັດຊື້ ຂອງກະຊວງອຸດສາຫະກໍາ ແລະ ການຄ້າ.

**ຫົວໜ້າຫ້ອງການ**

ປອ. ບົວລັນ ວິລະວົງ